ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
໙໙໙ 📖 ໙໙໙

ກະຊວງສຶກສາທິການ ແລະ ກິລາ

1076-

ເລກທີ........./ສສກ.ຈຕ
ນະຄອນຫຼວງວຽງຈັນ, ວັນທີ 26 FEB 2016

# ຂໍ້ຕົກລົງຂອງລັດຖະມົນຕີ

## ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງສູນການສຶກສານອກໂຮງຮຽນ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມ ກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງ) ສະບັບເລກທີ 62/ສພຊ, ລົງວັນທີ 16 ກໍລະນີ 2015;
- ອີງຕາມ ດໍາລັດນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 282/ນຍ ລົງວັນທີ 07 ກັນຍາ 2011;
- ອີງຕາມ ການສະເໜີຂອງກົມການສຶກສານອກໂຮງຮຽນ ແລະ ຕາມການຄົ້ນຄວ້າຂອງກົມຈັດຕັ້ງ ແລະ ພະນັກງານ.

**ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ**

**ຈຶ່ງຕົກລົງ:**

## ໝວດທີ 1

## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ໄດ້ກໍານົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບກົງຈັກ ແລະ ແບບແຜນວິທີເຮັດວຽກເພື່ອເປັນບ່ອນອີງໃນດ້ານນິຕິກໍາໃຫ້ແກ່ການຈັດຕັ້ງ ແລະ ເຄື່ອນໄຫວຂອງສູນການສຶກສານອກໂຮງຮຽນ ແນ່ໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ລັດຖະບານໂດຍສະເພາະແມ່ນການສຶກສາ ແລະ ກິລາ ໃຫ້ປະກົດຜົນເປັນຈິງ ແລະ ມີຄຸນນະພາບ.

### ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ

**ກ. ສູນພັດທະນາການສຶກສານອກໂຮງຮຽນ**

ສູນພັດທະນາການສຶກສານອກໂຮງຮຽນຂຽນດ້ວຍຕົວອັກສອນຫຍໍ້ "ສພນ" ເປັນກົງຈັກວິຊາການ ໃນໂຄງປະກອບການຈັດຕັ້ງທີ່ຂຶ້ນກັບກົມການສຶກສານອກໂຮງຮຽນ ມີພາລະບົດບາດເປັນເສນາທິການໃຫ້ກົມການສຶກສານອກໂຮງຮຽນກ່ຽວກັບວຽກງານພັດທະນາຫຼັກສູດ, ສື່ການຮຽນ-ການສອນ, ຝຶກອົບຮົມຄູຝຶກ, ບຸກຄະລາກອນ, ການບໍາລຸງຍົກລະດັບການສຶກສາ, ຝຶກອົບຮົມວິຊາຊີບຂັ້ນພື້ນຖານ, ການຮຽນຮູ້ຕະຫຼອດຊີວິດ ແລະ ເຮັດໜ້າທີ່ເປັນສູນການສຶກສານອກໂຮງຮຽນພາກກາງ.

**ຂ. ສູນການສຶກສານອກໂຮງຮຽນພາກ**

ສູນການສຶກສານອກໂຮງຮຽນພາກມີ 3 ສູນ: ສູນການສຶກສານອກໂຮງຮຽນພາກເໜືອ ຂຽນດ້ວຍຕົວອັກສອນຫຍໍ້"ສນໜ", ສູນການສຶກສານອກໂຮງຮຽນພາກກາງ(ສູນພັດທະນາການສຶກສານອກໂຮງຮຽນ), ສູນການສຶກສານອກໂຮງຮຽນພາກໃຕ້ຂຽນດ້ວຍຕົວອັກສອນຫຍໍ້ "ສນຕ". ສູນດັ່ງກ່າວນີ້ເປັນກົງຈັກບໍລິຫານວິຊາການ

ໃນລະບົບກົງຈັກການຈັດຕັ້ງຂອງກະຊວງສຶກສາທິການ ແລະ ກິລາ, ຊຶ່ງມີພາລະບົດບາດເປັນເສນາທິການດ້ານວິຊາການໃຫ້ແກ່ກົມການສຶກສານອກໂຮງຮຽນກ່ຽວກັບວຽກງານພັດທະນາຫຼັກສູດທ້ອງຖິ່ນ, ສື່ການຮຽນ-ການສອນ, ຝຶກອົບຮົມຄູຝຶກ, ບຸກຄະລາກອນ, ການບຳລຸງຍົກລະດັບການສຶກສາ, ຝຶກອົບຮົມວິຊາຊີບຂັ້ນພື້ນຖານ, ການຮຽນຮູ້ຕະຫຼອດຊີວິດໃນຂອບເຂດທີ່ຕົນຮັບຜິດຊອບໂດຍຕິດພັນກັບແຜນພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ ແລະ ທາງດ້ານແນວຄິດການເມືອງແມ່ນຂຶ້ນກັບພະແນກສຶກສາທິການ ແລະ ກິລາ ແຂວງບ່ອນສູນຕັ້ງຢູ່.

ການບໍລິການດ້ານວິຊາການກ່ຽວກັບການສຶກສານອກໂຮງຮຽນຂອງສູນການສຶກສານອກໂຮງຮຽນພາກໄດ້ແບ່ງ ຄວາມຮັບຜິດຊອບໃນການປະສານງານ, ສົ່ງເສີມ ແລະ ສົມທົບກັບບັນດາແຂວງດັ່ງນີ້:

- ສູນການສຶກສານອກໂຮງຮຽນພາກເໜືອມີ: ແຂວງ ຜົ້ງສາລີ, ຫົວພັນ, ບໍ່ແກ້ວ, ຫຼວງນ້ຳທາ, ອຸດົມໄຊ, ຊຽງຂວາງ, ຫຼວງພະບາງ ແລະ ໄຊຍະບູລີ.
- ສູນພັດທະນາການສຶກສານອກໂຮງຮຽນ(ພາກກາງ)ມີ: ນະຄອນຫຼວງວຽງຈັນ, ແຂວງວຽງຈັນ, ໄຊສົມບູນ, ບໍລິຄຳໄຊ ແລະ ຄຳມ່ວນ.
- ສູນການສຶກສານອກໂຮງຮຽນພາກໃຕ້ມີ: ແຂວງ ສະຫວັນນະເຂດ, ຈຳປາສັກ, ສາລະວັນ, ເຊກອງ ແລະ ອັດຕະປື.

**ຄ. ສູນການສຶກສານອກໂຮງຮຽນ ຂັ້ນແຂວງ**

ສູນການສຶກສານອກໂຮງຮຽນຂັ້ນແຂວງຂຽນດ້ວຍຕົວອັກສອນຫຍໍ້ "ສນຂ" ເປັນກົງຈັກບໍລິຫານວິຊາການໜຶ່ງ ແລະ ຢູ່ພາຍໃຕ້ການຄຸ້ມຄອງ ຂອງພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ຊຶ່ງມີພາລະບົດບາດໃນການຄົ້ນຄ້ວາ ແລະ ຈັດຕັ້ງປະຕິບັດກິດຈະກຳການສຶກສານອກໂຮງຮຽນ ພາຍໃນແຂວງຕາມຂອບເຂດທີ່ຕົນຮັບຜິດຊອບ. ພ້ອມທັງສົ່ງເສີມການປະຕິບັດກິດຈະກຳການສຶກສານອກໂຮງຮຽນຢູ່ສູນການສຶກສານອກໂຮງຮຽນຂັ້ນເມືອງ.

**ງ. ສູນການສຶກສານອກໂຮງຮຽນຂັ້ນເມືອງ**

ສູນການສຶກສານອກໂຮງຮຽນຂັ້ນເມືອງຂຽນດ້ວຍຕົວອັກສອນຫຍໍ້ "ສນມ" ເປັນກົງຈັກບໍລິຫານວິຊາການໜຶ່ງ ແລະ ຢູ່ພາຍໃຕ້ການຄຸ້ມຄອງຂອງຫ້ອງການສຶກສາທິການ ແລະ ກິລາ ເມືອງ, ມີພາລະບົດບາດໃນການຄົ້ນຄ້ວາ, ຈັດຕັ້ງປະຕິບັດກິດຈະກຳການສຶກສານອກໂຮງຮຽນພາຍໃນເມືອງໃນຂອບເຂດທີ່ຕົນຮັບຜິດຊອບ ແລະ ສົ່ງເສີມການປະຕິບັດກິດຈະກຳຢູ່ສູນການຮຽນຮູ້ຊຸມຊົນ.

**ຈ. ສູນການຮຽນຮູ້ຊຸມຊົນ**

ສູນການຮຽນຮູ້ຊຸມຊົນຂຽນດ້ວຍຕົວອັກສອນຫຍໍ້ "ສຮຊ" ຢູ່ພາຍໃຕ້ການຄຸ້ມຄອງດ້ານວິຊາການຂອງຫ້ອງການສຶກສາທິການ ແລະ ກິລາ ເມືອງ, ເທດສະບານ ຊຶ່ງມີພາລະບົດບາດໃນການຈັດຕັ້ງປະຕິບັດກິດຈະກຳການສຶກສານອກໂຮງຮຽນຢູ່ຊຸມຊົນ ໂດຍສະເພາະກິດຈະກຳການຮຽນຮູ້ໜັງສື, ບຳລຸງຍົກລະດັບການສຶກສາຂັ້ນປະຖົມ ແລະ ມັດທະຍົມຕອນຕົ້ນ, ການຝຶກອົບຮົມວິຊາຊີບ, ການສົ່ງເສີມການຮຽນຮູ້ຕະຫຼອດຊີວິດ ແລະ ກິດຈະກຳພັດທະນາຊຸມຊົນ ຕາມຄວາມຕ້ອງການຂອງປະຊາຊົນໃນຂອບເຂດທີ່ຕົນຮັບຜິດຊອບ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3. ໜ້າທີ່**

**ກ. ສູນພັດທະນາການສຶກສານອກໂຮງຮຽນ**

ສູນພັດທະນາການສຶກສານອກໂຮງຮຽນທັງເປັນສູນພາກກາງມີໜ້າທີ່ດັ່ງນີ້:

1) ຜັນຂະຫຍາຍແນວທາງ, ນະໂຍບາຍຂອງພັກ-ລັດຖະບານ, ມະຕິຄຳສັ່ງ, ແຜນການ, ຂໍ້ກຳນົດລະບຽບຕ່າງໆ ຂອງກະຊວງສຶກສາທິການ ແລະ ກິລາ ກໍຄືກົມການສຶກສານອກໂຮງຮຽນມາເປັນແຜນການ, ແຜນງານ ແລະ ໂຄງການຂອງສູນພັດທະນາການສຶກສານອກໂຮງຮຽນ ແລະ ສູນການສຶກສານອກໂຮງຮຽນພາກກາງ.

2) ພັດທະນາຫຼັກສູດລຶບລ້າງຄວາມບໍ່ຮູ້ໜັງສື, ຫຼັກສູດບຳລຸງຍົກລະດັບການສຶກສາ, ຫຼັກສູດວິຊາຊີບຂັ້ນພື້ນຖານ, ພັດທະນາຫຼັກສູດເສີມ, ຄົ້ນຄ້ວາອອກແບບສື່ການຮຽນ-ການສອນ, ຄົ້ນຄ້ວາຮູບແບບການຈັດກິດຈະກຳ ແລະ ເທັກໂນໂລຊີ ສຳລັບການສຶກສານອກໂຮງຮຽນ, ການຮຽນຮູ້ຕະຫຼອດຊີວິດ ແລະ ການສຶກສາຕາມອັດທະຍາໄສຕາມແຜນພັດທະນາການສຶກສານອກໂຮງຮຽນທີ່ກົມການສຶກສານອກໂຮງຮຽນກຳນົດອອກໃນແຕ່ລະໄລຍະ.

3) ປະສານງານສົມທົບກັບພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫລວງໃນການສ້າງແຜນການ, ກິດຈະກຳ ແລະ ການຈັດຕັ້ງປະຕິບັດແຜນການພັດທະນາການສຶກສານອກໂຮງຮຽນ.

4) ປຶກສາຫາລື ແລະ ແລກປ່ຽນບົດຮຽນກັບພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງໃນຂອບເຂດຮັບຜິດຊອບຂອງຕົນກ່ຽວກັບການພັດທະນາດ້ານວິຊາການຂອງສູນການສຶກສານອກໂຮງຮຽນຂັ້ນແຂວງ, ຂັ້ນເມືອງ ແລະ ສູນການຮຽນຮູ້ຊຸມຊົນ.

5) ສ້າງ ແລະ ປັບປຸງ ນິຕິກຳ ກ່ຽວກັບການຄຸ້ມຄອງວຽກງານຂອງສູນ.

6) ຈັດຕັ້ງການບຳລຸງຍົກລະດັບການສຶກສາ, ຝຶກອົບຮົມວິຊາຊີບຂັ້ນພື້ນຖານ, ການສຶກສາທາງໄກ, ການສຶກສາຕາມອັດທະຍາໄສ ແລະ ສົ່ງເສີມການຮຽນຮູ້ຕະຫຼອດຊີວິດ.

7) ສ້າງສູນໃຫ້ກາຍເປັນສູນແຫ່ງການຮຽນຮູ້.

8) ຝຶກອົບຮົມບຸກຄະລາກອນການສຶກສານອກໂຮງຮຽນພາຍໃນສູນ ແລະ ບັນດາແຂວງໃນຂອບເຂດຮັບຜິດຊອບຂອງຕົນ.

9) ຄົ້ນຄ້ວາ-ວິໄຈ ກ່ຽວກັບການພັດທະນາການສຶກສານອກໂຮງຮຽນ.

10) ພັດທະນາ ແລະ ນຳໃຊ້ ITC ເຂົ້າໃນການບໍລິຫານຄຸ້ມຄອງສູນ, ການສະໜອງ ແລະ ການແລກປ່ຽນຂໍ້ມູນຂ່າວສານການສຶກສານອກໂຮງຮຽນລະຫວ່າງສູນກັບບັນດາແຂວງທີ່ຢູ່ໃນຄວາມຮັບຜິດຊອຂອງຕົນ ແລະ ລະຫວ່າງ ສູນກັບກະຊວງສຶກສາທິການ ແລະ ກິລາ.

11) ເກັບກຳ ແລະ ລາຍງານຂໍ້ມູນ ສະຖິຕິປະຈຳປີໃຫ້ສູນສະຖິຕິ-ເຕັກໂນໂລຊີຂ່າວສານການສຶກສາ ແລະ ກິລາ, ກະຊວງສຶກສາທິການ ແລະ ກິລາ.

12) ຮ່ວມມື ແລະ ແລກປ່ຽນບົດຮຽນໃນດ້ານວິຊາການກັບສະຖາບັນການສຶກສາ, ສູນການສຶກສານອກໂຮງຮຽນພາກ, ແຂວງ ແລະ ເມືອງ.

13) ກວດກາ, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານການສຶກສານອກໂຮງຮຽນໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

14) ພົວພັນ, ຮ່ວມມື ແລະ ຍາດແຍ່ງການຊ່ວຍເຫຼືອຈາກອົງການຈັດຕັ້ງຂອງລັດ,ອົງການຈັດຕັ້ງສາກົນອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ແລະ ອົງການຈັດຕັ້ງຕ່າງໆທີ່ບໍ່ຫວັງຜົນກຳໄລພາຍໃນ ແລະ ຕ່າງປະ ເທດເພື່ອພັດທະນາສູນ ໂດຍການເຫັນດີຈາກກົມການສຶກສານອກໂຮງຮຽນ.

15) ຂື້ນແຜນຄວາມຕ້ອງການພະນັກງານບໍລິຫານ, ຄູສອນປະຈຳປີ.

16) ສ້າງແຜນພັດທະນາສູນໄລຍະຍາວ, ແຜນການ ແລະ ແຜນງົບປະມານປະຈຳປີ.

17) ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດກິດຈະກຳຕ່າງໆໃຫ້ຂັ້ນເທິງຊາບເປັນປົກກະຕິ.

18) ປະຕິບັດວຽກງານອື່ນຕາມການມອບໝາຍຂອງກົມການສຶກສານອກໂຮງຮຽນ.

໒. **ສູນການສຶກສານອກໂຮງຮຽນພາກ**

ສູນການສຶກສານອກໂຮງຮຽນພາກມີໜ້າທີ່ດັ່ງນີ້:

1) ຜັນຂະຫຍາຍແນວທາງ, ນະໂຍບາຍຂອງພັກ-ລັດຖະບານ, ມະຕິຄຳສັ່ງ, ແຜນການ, ຂໍ້ກຳນົດລະບຽບຕ່າງໆ ຂອງກະຊວງສຶກສາທິການ ແລະ ກິລາ ກໍຄືກົມການສຶກສານອກໂຮງຮຽນ ມາເປັນຍຸດທະສາດ, ແຜນງານ ແລະ ໂຄງການການສຶກສານອກໂຮງຮຽນປະຈຳພາກ.

2) ປຶກສາຫາລື ແລະ ແລກປ່ຽນບົດຮຽນກັບພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງໃນຂອບເຂດຮັບຜິດຊອບຂອງຕົນກ່ຽວກັບການພັດທະນາດ້ານວິຊາການຂອງສູນການສຶກສານອກໂຮງຮຽນຂັ້ນແຂວງ, ຂັ້ນເມືອງ ແລະ ສູນການຮຽນຮູ້ຊຸມຊົນ.

3) ປະສານສົມທົບກັບພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເພື່ອສ້າງແຜນພັດທະນາການສຶກສານອກໂຮງຮຽນ.

4) ຝຶກອົບຮົມບຸກຄະລາກອນການສຶກສານອກໂຮງຮຽນພາຍໃນສູນ ແລະ ຢູ່ບັນດາແຂວງໃນຂອບເຂດຮັບຜິດຊອບຂອງຕົນ.

5) ພັດທະນາຫຼັກສູດທ້ອງຖິ່ນ, ປື້ມອ່ານເສີມ ແລະ ສື່ການຮຽນ-ການສອນ ສຳລັບການລຶບລ້າງຄວາມບໍ່ຮູ້ໜັງສື, ບຳລຸງຍົກລະດັບການສຶກສາ ແລະ ອົບຮົມວິຊາຊີບຂັ້ນພື້ນຖານ ຕາມຄວາມຕ້ອງການ ຂອງ ກຸ່ມເປົ້າໝາຍໃນທ້ອງຖິ່ນ.

6) ຈັດຕັ້ງການບຳລຸງຍົກລະດັບການສຶກສາ, ຝຶກອົບຮົມວິຊາຊີບຂັ້ນພື້ນຖານ, ການສຶກສາທາງໄກ, ການສຶກສາຕາມອັດທະຍາໄສ ແລະ ສົ່ງເສີມການຮຽນຮູ້ຕະຫຼອດຊີວິດ.

7) ສ້າງສູນໃຫ້ກາຍເປັນສູນແຫ່ງການຮຽນຮູ້.

8) ກວດກາ, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານການສຶກສານອກໂຮງຮຽນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

9) ພັດທະນາ ແລະ ນຳໃຊ້ ITC ເຂົ້າໃນການບໍລິຫານຄຸ້ມຄອງສູນ, ການສະໜອງ ແລະ ການແລກປ່ຽນຂໍ້ມູນຂ່າວສານການສຶກສານອກໂຮງຮຽນ ລະຫວ່າງສູນກັບ ບັນດາແຂວງທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ແລະ ລະຫວ່າງສູນກັບກະຊວງສຶກສາທິການ ແລະ ກິລາ.

10) ເກັບກຳ ແລະ ລາຍງານຂໍ້ມູນ ສະຖິຕິປະຈຳປີໃຫ້ສູນສະຖິຕິ-ເຕັກໂນໂລຊີຂ່າວສານການສຶກສາ ແລະ ກິລາ, ກະຊວງສຶກສາທິການ ແລະ ກິລາ.

11) ຮ່ວມມື ແລະ ແລກປ່ຽນບົດຮຽນໃນດ້ານວິຊາການກັບສະຖາບັນການສຶກສາ, ສູນການສຶກສານອກໂຮງຮຽນແຕ່ລະຂັ້ນ.

12) ປະສານສົມທົບກັບສູນການສຶກສານອກໂຮງຮຽນ ປະຈຳພາກອື່ນໆ, ສະຖາບັນການສຶກສາຕ່າງໆ ແລະ ຂະແໜງການທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ, ອົງການຈັດຕັ້ງມະຫາຊົນ ແລະ ຊຸມຊົນໃນດ້ານການຈັດການສຶກສານອກໂຮງຮຽນ.

13) ພົວພັນ, ຮ່ວມມື ແລະ ຍາດແຍ່ງການຊ່ວຍເຫລືອຈາກອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ແລະ ອົງການຈັດຕັ້ງຕ່າງໆ ທີ່ບໍ່ຫວັງຜົນກຳໄລພາຍໃນ ແລະ ຕ່າງປະເທດເພື່ອພັດທະນາສູນ ໂດຍການເຫັນດີຈາກກົມການສຶກສານອກໂຮງຮຽນ.

14) ຂື້ນແຜນຄວາມຕ້ອງການພະນັກງານບໍລິຫານ, ຄູສອນປະຈຳປີ.

15) ສ້າງແຜນພັດທະນາສູນໄລຍະຍາວ ແລະ ປະຈຳປີ ແລະ ແຜນງົບປະມານປະຈຳປີ.

16) ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງສູນໃຫ້ກົມການສຶກສານອກໂຮງຮຽນ ເປັນປົກກະຕິ.

17) ປະຕິບັດວຽກອື່ນໆຕາມການມອບໝາຍຂອງຂັ້ນເທິງ.

**ຄ. ສູນການສຶກສານອກໂຮງຮຽນຂັ້ນແຂວງ**

ສູນການສຶກສານອກໂຮງຮຽນແຂວງມີໜ້າທີ່ດັ່ງນີ້:

1) ຜັນຂະຫຍາຍແນວທາງ, ນະໂຍບາຍຂອງພັກ-ລັດຖະບານ, ມະຕິຄຳສັ່ງ, ແຜນການ, ຂໍ້ກຳນົດລະບຽບການຕ່າງໆ ຂອງກະຊວງສຶກສາທິການ ແລະ ກິລາ ກໍຄືກົມການສຶກສານອກໂຮງຮຽນ ແລະ ພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງ ມາເປັນຍຸດທະສາດ, ແຜນງານ ແລະ ໂຄງການການສຶກສານອກໂຮງຮຽນຂອງສູນຕົນ.
2) ຈັດການຮຽນ-ການສອນລຶບລ້າງຄວາມບໍ່ຮູ້ໜັງສື ບຳລຸງຍົກລະດັບການສຶກສາ ແລະ ອົບຮົມວິຊາຊີບຂັ້ນພື້ນຖານໃຫ້ແກ່ກຸ່ມເປົ້າໝາຍ ແລະ ກຸ່ມສົນໃຈເປັນຕົ້ນແມ່ນຊາວໜຸ່ມ, ແມ່ຍິງໃນເຂດຊົນນະບົດເພື່ອພັດທະນາຄຸນນະພາບຊີວິດຂອງເຂົາເຈົ້າ.
3) ສ້າງສູນໃຫ້ກາຍເປັນສູນແຫ່ງການຮຽນຮູ້.
4) ຈັດຕັ້ງການຝຶກອົບຮົມບຸກຄະລາກອນການສຶກສານອກໂຮງຮຽນພາຍໃນສູນ.
5) ພັດທະນາຫຼັກສູດທ້ອງຖິ່ນ, ປຶ້ມອ່ານເສີມ ແລະ ສື່ການຮຽນ-ການສອນ ສຳລັບການລຶບລ້າງຄວາມບໍ່ຮູ້ໜັງສື, ບຳລຸງຍົກລະດັບການສຶກສາ ແລະ ຝຶກອົບຮົມວິຊາຊີບຂັ້ນພື້ນຖານ ຕາມຄວາມຕ້ອງການຂອງທ້ອງຖິ່ນ.
6) ປະສານສົມທົບກັບສູນການສຶກສານອກໂຮງຮຽນປະຈຳພາກ, ສະຖາບັນການສຶກສາຕ່າງໆ ແລະ ຂະແໜງການທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ, ອົງການຈັດຕັ້ງມະຫາຊົນ ແລະ ຊຸມຊົນໃນດ້ານການຈັດການສຶກສານອກໂຮງຮຽນຢູ່ແຂວງຂອງຕົນ.
7) ສົມທົບກັບຂະແໜງການສຶກສານອກໂຮງຮຽນ, ພະແນກສຶກສາທິການແຂວງ/ນະຄອນຫຼວງເພື່ອດຳເນີນການຊຸກຍູ້, ຕິດຕາມ, ແລະ ປະເມີນຜົນດ້ານວິຊາການຂອງສູນການສຶກສານອກໂຮງຮຽນຂັ້ນເມືອງ ແລະ ສູນຮຽນຮູ້ຊຸມຊົນ.
8) ສ້າງ ແລະ ນຳໃຊ້ລະບົບຖານຂໍ້ມູນຂ່າວສານການສຶກສານອກໂຮງຮຽນ.
9) ເກັບກຳ ແລະ ລາຍງານຂໍ້ມູນສະຖິຕິປະຈຳປີໃຫ້ຂະແໜງສະຖິຕິ-ເຕັກໂນໂລຊີຂ່າວສານການສຶກສາ ແລະ ກິລາ, ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ.
10) ຂື້ນແຜນຄວາມຕ້ອງການພະນັກງານບໍລິຫານ, ຄູສອນປະຈຳປີ.
11) ສ້າງແຜນພັດທະນາສູນໄລຍະຍາວ, ແຜນການ ແລະ ແຜນງົບປະມານປະຈຳປີ.
12) ປະສານສົມທົບກັບສູນການສຶກສານອກໂຮງຮຽນພາກ, ສະຖານການສຶກສາຕ່າງໆ ແລະ ຂະແໜງການທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ, ອົງການຈັດຕັ້ງມະຫາຊົນ ແລະ ຊຸມຊົນອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງສາກົນ ,ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ອົງການຈັດຕັ້ງຕ່າງໆທີ່ບໍ່ຫວັງຜົນກຳໄລພາຍໃນ ແລະ ຕ່າງປະເທດເພື່ອຍາດແຍ່ງການຊ່ວຍເຫຼືອພັດທະນາສູນຂອງຕົນ.
13) ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດກິດຈະກຳຕ່າງໆໃຫ້ຂັ້ນເທິງຊາບເປັນປົກກະຕິ.
14) ປະຕິບັດວຽກງານອື່ນຕາມການມອບໝາຍຂອງພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ແລະ ກົມການສຶກສານອກໂຮງຮຽນ.

**ງ. ສູນການສຶກສານອກໂຮງຮຽນເມືອງ.**

ສູນການສຶກສານອກໂຮງຮຽນຂັ້ນເມືອງມີໜ້າທີ່ດັ່ງນີ້:

1. ຜັນຂະຫຍາຍ ມະຕິຄຳສັ່ງ, ແຜນການ, ຂໍ້ກຳນົດ ແລະ ລະບຽບການຕ່າງໆ ຂອງກະຊວງສຶກສາທິການ ແລະ ກິລາ, ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ກໍຄືຫ້ອງການສຶກສາທິການ ແລະ ກິລາ ເມືອງມາເປັນແຜນການຂອງສູນຕົນ.
2. ພັດທະນາຫຼັກສູດທ້ອງຖິ່ນ, ປຶ້ມອ່ານເສີມ, ສື່ການຮຽນ-ການສອນສຳລັບການສຶກສານອກໂຮງຮຽນ ແລະ ການຮຽນຮູ້ຕະຫຼອດຊີວິດ.

3. ເກັບກຳສະຖິຕິ ແລະ ຂໍ້ມູນຕ່າງໆຂອງການສຶກສານອກໂຮງຮຽນ ຕາມຂອບເຂດທີ່ສູນຮັບຜິດຊອບແລ້ວສ້າງແຜນການ ແລະ ແຜນງົບປະມານເພື່ອຈັດຕັ້ງການຮຽນ-ການສອນ.
4. ຈັດການຮຽນ-ການສອນລຶບລ້າງຄວາມບໍ່ຮູ້ໜັງສື, ບຳລຸງຍົກລະດັບການສຶກສາ ແລະ ອົບຮົມວິຊາຊີບຂັ້ນພື້ນຖານໃຫ້ແກ່ປະຊາຊົນກຸ່ມເປົ້າໝາຍ ແລະ ກຸ່ມສົນໃຈເປັນຕົ້ນແມ່ນຊາວໜຸ່ມ, ແມ່ຍິງໃນເຂດຊົນນະບົດເພື່ອພັດທະນາຄຸນນະພາບຊີວິດຂອງເຂົາເຈົ້າ.
5. ສ້າງສູນການສຶກສານອກໂຮງຮຽນເມືອງໃຫ້ກາຍເປັນສູນແຫ່ງການຮຽນຮູ້.
6. ສ້າງແຜນ ແລະ ຝຶກອົບຮົມດ້ານວິຊາການໃຫ້ແກ່ບຸກຄະລາກອນການສຶກສານອກໂຮງຮຽນໃນຂອບເຂດບໍລິການຂອງຕົນ.
7. ສົມທົບກັບໜ່ວຍງານການສຶກສານອກໂຮງຮຽນ,ຫ້ອງການສຶກສາທິການ ແລະ ກິລາເມືອງເພື່ອຊຸກຍູ້, ຕິດຕາມ, ແລະ ປະເມີນຜົນດ້ານວິຊາການຂອງສູນການຮຽນຮູ້ຊຸມຊົນ.
8. ສ້າງ ແລະ ນຳໃຊ້ລະບົບຖານຂໍ້ມູນຂ່າວສານການສຶກສານອກໂຮງຮຽນ.
9. ເກັບກຳ ແລະ ລາຍງານຂໍ້ມູນ ສະຖິຕິປະຈຳປີໃຫ້ໜ່ວຍງານສະຖິຕິ-ເຕັກໂນໂລຊີຂ່າວສານການສຶກສາ ແລະ ກິລາ, ຫ້ອງການສຶກສາທິການ ແລະ ກິລາເມືອງ.
10. ພົວພັນ ແລະ ຮ່ວມມືກັບອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງເອກະຊົນ, ສັງຄົມ ແລະ ຊຸມຊົນຕ່າງໆ ເພື່ອໂຄສະນາເຜີຍແຜ່ ແລະ ຍາດແຍ່ງທຶນຮອນມາສະໜັບສະໜູນວຽກງານສູນຂອງຕົນ ໂດຍການເຫັນດີຈາກຫ້ອງການສຶກສາທິການ ແລະ ກິ ລາເມືອງ.
11. ປະສານສົມທົບທາງດ້ານວິຊາການກັບສູນການສຶກສານອກໂຮງຮຽນຂອງແຂວງ, ສະຖາບັນການສຶກສາຕ່າງໆທັງພາກລັດ ແລະ ເອກະຊົນເພື່ອພັດທະນາສູນ.
12. ຂຶ້ນແຜນ ຄວາມຕ້ອງການພະນັກງານບໍລິຫານ, ຄູສອນປະຈຳປີ.
13. ສ້າງແຜນພັດທະນາສູນໄລຍະຍາວ, ແຜນການ ແລະແຜນງົບປະມານປະຈຳປີຮັບໃຊ້ການພັດທະນາສູນ.
14. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງສູນໃຫ້ ຫ້ອງການສຶກສາທິການ ແລະ ກິລາເມືອງເປັນປົກກະຕິ.
15. ປະຕິບັດວຽກອື່ນຕາມການມອບໝາຍຂອງຂັ້ນເທິງ.

**ຈ. ສູນການຮຽນຮູ້ຊຸມຊົນ.**

ສູນການຮຽນຮູ້ຊຸມຊົນມີໜ້າທີ່ດັ່ງນີ້:

1. ຈັດຕັ້ງປະຕິບັດ ແລະ ເຜີຍແຜ່ມະຕິຄຳສັ່ງ, ແຜນການ, ຂໍ້ກຳນົດ ແລະ ລະບຽບການຕ່າງໆຂອງກະຊວງສຶກສາທິການ ແລະ ກິລາ, ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ກໍຄືຫ້ອງການສຶກສາທິການ ແລະ ກິລາ.
2. ສົມທົບແໜ້ນກັບອຳນາດການປົກຄອງບ້ານ, ກຸ່ມບ້ານ, ອົງການຈັດຕັ້ງມະຫາຊົນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ ວາງແຜນການ, ແຜນເຄື່ອນໄຫວກິດຈະກຳຕ່າງໆ ແລະ ແຜນງົບປະມານເພື່ອພັດທະນາສູນໃນແຕ່ລະໄລຍະ.
3. ເກັບກຳສະຖິຕິ ແລະ ຂໍ້ມູນຂອງການສຶກສານອກໂຮງຮຽນຕາມຂອບເຂດທີ່ສູນຮັບຜິດຊອບແລ້ວລາຍງານເປັນປະຈຳປີໃຫ້ຫ້ອງການສຶກສາທິການ ແລະ ກິລາ ເມືອງ.
4. .ສ້າງແຜນການ ແລະ ແຜນງົບປະມານຈັດຕັ້ງການຮຽນ-ການສອນລຶບລ້າງຄວາມບໍ່ຮູ້ໜັງສື, ບຳລຸງຍົກລະດັບການສຶກສາຊັ້ນປະຖົມ, ມັດທະຍົມຕອນຕົ້ນ ແລະ ຝຶກອົບຮົມວິຊາຊີບຂັ້ນພື້ນຖານໃຫ້ກຸ່ມເປົ້າໝາຍໃນເຂດບໍລິການຂອງສູນ.
5. ຈັດກິດຈະກຳພັດທະນາຊຸມຊົນຕາມຄວາມຕ້ອງການຂອງປະຊາຊົນໃນຂອບເຂດທີ່ຕົນຮັບຜິດ ຊອບ.

6. ສະໜອງຂໍ້ມູນ-ຂ່າວສານ ແລະ ຄວາມຮູ້ຕ່າງໆກ່ຽວກັບການພັດທະນາຄຸນນະພາບຊີວິດຂອງປະຊາຊົນ.
7. ຂຶ້ນແຜນ ຄວາມຕ້ອງການດ້ານບຸກຄະລາກອນ ແລະ ດ້ານງົບປະມານຮັບໃຊ້ການພັດທະນາສູນ.
8. ສົມທົບກັບອໍານາດການປົກຄອງບ້ານ ຈັດການວາງສະແດງ ແລະ ຂາຍຜະລິດຕະພັນຂອງຊາວບ້ານ ຫຼື ຈັດກິດຈະກໍາອື່ນໆ ທີ່ມີລັກສະນະເປັນສ່ວນລວມຂອງບ້ານ.
9. ສົ່ງເສີມໃຫ້ປະຊາຊົນໃນຊຸມຊົນໄດ້ມີການຮຽນຮູ້ຢ່າງຕໍ່ເນື່ອງ ແລະ ການພັດທະນາຕົນເອງ ສາມາດນໍາຄວາມຮູ້ໄປພັດທະນາຄຸນນະພາບຊີວິດດີຂຶ້ນ.
10. ປຸກລະດົມຊາວບ້ານ, ຊຸມຊົນເປັນເຈົ້າການເຂົ້າຮ່ວມກິດຈະກໍາຂອງສູນ ແລະ ສົ່ງເສີມການຮຽນຮູ້ຕະຫຼອດຊີວິດ.
11. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງສູນຕົນ ໃຫ້ຫ້ອງການສຶກສາທິການ ແລະ ກິລາເມືອງເປັນປົກກະຕິ.
12. ປະຕິບັດວຽກອື່ນຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 4. ຂອບເຂດສິດ**

**ກ. ສູນພັດທະນາການສຶກສານອກໂຮງຮຽນ**

ສູນພັດທະນາການສຶກສານອກໂຮງຮຽນມີຂອບເຂດສິດດັ່ງນີ້:

1. ສະເໜີແຜນການ ແລະ ແຜນງົບປະມານ ເພື່ອພັດທະນາວຽກງານທີ່ຕົນຮັບຜິດຊອບ.
2. ສະເໜີຂັ້ນເທິງພິຈາລະນາ, ອະນຸມັດ, ປັບປຸງ, ສ້າງ ຫຼື ຍົກເລີກບັນດານິຕິກໍາຄຸ້ມຄອງການສຶກສາ ແລະ ກິລາທີ່ບໍ່ສອດຄ່ອງກັບວຽກງານຂອງຕົນ.
3. ຕິດຕາມ, ຊຸກຍູ້ ແລະ ປະເມີນສະພາບການຈັດຕັ້ງປະຕິບັດຫຼັກສູດ ແລະ ການນໍາໃຊ້ສື່ການຮຽນ-ການສອນ ການສຶກສານອກໂຮງຮຽນໃນຂອບເຂດທົ່ວປະເທດ.
4. ສົມທົບກັບອໍານາດການປົກຄອງທ້ອງຖິ່ນໃນຂອບເຂດຄວາມຮັບຜິດຊອບຂອງຕົນວາງແຜນພັດທະນາການສຶກສານອກໂຮງຮຽນ.
5. ສະເໜີຂັ້ນເທິງພິຈາລະນາ, ອະນຸມັດ, ສ້າງຕັ້ງ ຫຼື ຍົກເລີກຫົວໜ່ວຍການຈັດຕັ້ງຂອງຕົນ.
6. ສະເໜີຂັ້ນເທິງບັນຈຸ, ແຕ່ງຕັ້ງ, ປົດຕໍາແໜ່ງ, ພະນັກງານວິຊາການທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນຕາມການແບ່ງຂັ້ນຄຸ້ມຄອງ ແລະ ຕາມລະບຽບກົດໝາຍ.
7. ຄຸ້ມຄອງ, ນໍາໃຊ້ງົບປະມານ, ວັດຖຸ-ຊັບສິນ, ກອງທຶນ, ທຶນຊ່ວຍເຫຼືອປະເພດຕ່າງໆ ຕາມການອະນຸມັດຂອງຫົວໜ້າກົມ.
8. ປະຕິບັດໂຄງການຊ່ວຍເຫຼືອລ້າ, ໂຄງການຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຕາມການອະນຸມັດຂອງຫົວໜ້າກົມ.
9. ສະເໜີຫົວໜ້າກົມປົກປ້ອງ, ຄຸ້ມຄອງບຸກຄະລາກອນ, ຊັບສິນ, ລິຂະສິດທາງດ້ານການສຶກສານອກໂຮງຮຽນ ຕາມຄວາມຮັບຜິດຊອບຂອງສູນ.
10. ກວດກາ, ຕີລາຄາ ແລະ ປະເມີນຜົນ ການປະຕິບັດໜ້າທີ່ວຽກງານຂອງພະນັກງານພາຍໃນສູນ.
11. ປະຕິບັດວຽກງານອື່ນຕາມການມອບໝາຍຂອງຫົວໜ້າກົມ.

**ຂ. ສູນການສຶກສານອກໂຮງຮຽນພາກ.**

ສູນການສຶກສານອກໂຮງຮຽນພາກມີຂອບເຂດສິດ ດັ່ງນີ້:

1. ສະເໜີແຜນການ ແລະ ແຜນງົບປະມານ ເພື່ອພັດທະນາວຽກງານທີ່ຕົນຮັບຜິດຊອບ.
2. ສະເໜີຂັ້ນເທິງພິຈາລະນາ, ອະນຸມັດ, ປັບປຸງ, ສ້າງ ຫຼື ຍົກເລີກບັນດານິຕິກໍາຄຸ້ມຄອງການສຶກສາ ແລະ ກິລາທີ່ບໍ່ສອດຄ່ອງກັບວຽກງານຂອງສູນ.

3. ຕິດຕາມ, ຊຸກຍູ້ສະພາບການຈັດຕັ້ງປະຕິບັດຫຼັກສູດ ແລະ ການນຳໃຊ້ສື່ການຮຽນ-ການສອນການສຶກສານອກໂຮງຮຽນໃນບັນດາແຂວງທີ່ສູນຮັບຜິດຊອບ.
4. ສົມທົບກັບອຳນາດການປົກຄອງທ້ອງຖິ່ນໃນຂອບເຂດຄວາມຮັບຜິດຊອບຂອງຕົນ ວາງແຜນພັດທະ ນາການສຶກສານອກໂຮງຮຽນ.
5. ສະເໜີຂັ້ນເທິງພິຈາລະນາ, ອະນຸມັດ, ສ້າງຕັ້ງ ຫຼື ຍົກເລີກຫົວໜ່ວຍການຈັດຕັ້ງຂອງຕົນ.
6. ສະເໜີຂັ້ນເທິງບັນຈຸ, ແຕ່ງຕັ້ງ, ປົດຕຳແໜ່ງ, ພະນັກງານວິຊາການທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນຕາມການແບ່ງຂັ້ນຄຸ້ມຄອງ ແລະ ຕາມລະບຽບກົດໝາຍ.
7. ຄຸ້ມຄອງ, ນຳໃຊ້ງົບປະມານ, ວັດຖຸ-ຊັບສິນ, ກອງທຶນ, ທຶນຊ່ວຍເຫຼືອປະເພດຕ່າງໆ ຕາມການອະນຸ ມັດຂອງຫົວໜ້າກົມ.
8. ປະຕິບັດໂຄງການຊ່ວຍເຫຼືອລ້າ, ໂຄງການຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຕາມການອະນຸມັດຂອງຫົວໜ້າກົມ.
9. ສະເໜີຫົວໜ້າກົມປົກປ້ອງ, ຄຸ້ມຄອງບຸກຄະລາກອນ, ຊັບສິນ, ລິຂະສິດທາງດ້ານການສຶກສານອກໂຮງຮຽນຕາມຄວາມຮັບຜິດຊອບຂອງສູນ.
10. ກວດກາ, ຕີລາຄາ ແລະ ປະເມີນຜົນ ການປະຕິບັດໜ້າທີ່ວຽກງານຂອງພະນັກງານພາຍໃນສູນ
11. ປະຕິບັດວຽກງານອື່ນຕາມການມອບໝາຍຂອງຂັ້ນເທິງ.

**ຄ. ສູນການສຶກສານອກໂຮງຮຽນແຂວງ**

ສູນການສຶກສານອກໂຮງຮຽນຂັ້ນແຂວງ ມີຂອບເຂດສິດ ດັ່ງນີ້:

1. ສະເໜີແຜນການ ແລະ ແຜນງົບປະມານ ເພື່ອພັດທະນາວຽກງານຂອງສູນ.
2. ສະເໜີຂັ້ນເທິງພິຈາລະນາ, ອະນຸມັດ, ປັບປຸງ, ສ້າງ ຫຼື ຍົກເລີກບັນດານິຕິກຳຄຸ້ມຄອງການສຶກສາ ແລະ ກິລາທີ່ບໍ່ສອດຄ່ອງກັບວຽກງານຂອງສູນ.
3. ສະເໜີສ້າງຕັ້ງ ແລະ ລົບລ້າງໜ່ວຍງານຕ່າງໆພາຍໃນສູນ.
4. ສະເໜີ, ແຕ່ງຕັ້ງ ແລະ ປົດຕຳແໜ່ງ ຫົວໜ້າ ແລະ ຮອງຫົວໜ້າໜ່ວຍງານຕ່າງໆ ແລະ ຊັບຊ້ອນ, ຍົກຍ້າຍ ປະຕິບັດນະໂຍບາຍ ແລະ ປະຕິບັດວິໄນພະນັກງານພາຍໃນສູນ.
5. ຄຸ້ມຄອງ ແລະ ນຳໃຊ້ຊັບສິນ, ວັດຖຸອຸປະກອນຕ່າງໆ ແລະ ການປະຕິບັດລາຍຈ່າຍງົບປະມານການ ເງິນ, ການບັນຊີຂອງສູນຕົນ ຕາມລະບຽບຫຼັກການ.
6. ຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດຫຼັກສູດ ແລະ ການນຳໃຊ້ສື່ການຮຽນ-ການສອນການສຶກສານອກໂຮງຮຽນ ໃນແຂວງ/ນະຄອນຫຼວງ.
7. ປະຕິບັດໂຄງການຊ່ວຍເຫຼືອລ້າ, ໂຄງການຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຕາມການອະນຸມັດຂອງຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ.
8. ສະເໜີຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ປົກປ້ອງ, ຄຸ້ມຄອງບຸກຄະລາກອນ ຊັບສິນ, ລິຂະສິດທາງດ້ານການສຶກສານອກໂຮງຮຽນ ຕາມຄວາມຮັບຜິດຊອບຂອງສູນ.
9. ກວດກາ, ຕີລາຄາ ແລະ ປະເມີນຜົນ ການປະຕິບັດໜ້າທີ່ວຽກງານຂອງພະນັກງານພາຍໃນສູນ
10. ປະຕິບັດວຽກງານອື່ນຕາມການມອບໝາຍຂອງຂັ້ນເທິງ.

**ງ. ສູນການສຶກສານອກໂຮງຮຽນເມືອງ.**

ສູນການສຶກສານອກໂຮງຮຽນຂັ້ນເມືອງ ມີຂອບເຂດສິດ ດັ່ງນີ້

1. ສະເໜີແຜນການ ແລະ ແຜນງົບປະມານ ເພື່ອພັດທະນາວຽກງານໃນສູນ.

2. ສະເໜີຂັ້ນເທິງພິຈາລະນາ, ອະນຸມັດ, ປັບປຸງ, ສ້າງ ຫຼື ຍົກເລີກບັນດານິຕິກຳຄຸ້ມຄອງການສຶກສາ ແລະ ກິລາທີ່ບໍ່ສອດຄ່ອງກັບວຽກງານຂອງຕົນ.
3. ສະເໜີສ້າງຕັ້ງ ແລະ ລົບລ້າງຈຸງານຕ່າງໆພາຍໃນສູນທີ່ເຫັນວ່າມີຄວາມຈຳເປັນ.
4. ສະເໜີບັນຈຸ, ແຕ່ງຕັ້ງ ແລະ ປົດຕຳແໜ່ງ ຫົວໜ້າ ແລະ ຮອງຫົວໜ້າຈຸງານຕ່າງໆ ແລະ ຊັບຊ້ອນ, ຍົກຍ້າຍ, ປະຕິບັດນະໂຍບາຍ ແລະ ປະຕິບັດວິໄນພະນັກງານພາຍໃນສູນ.
5. ຄຸ້ມຄອງ ແລະ ນຳໃຊ້ຊັບສິນ, ວັດຖຸອຸປະກອນຕ່າງໆ ແລະ ການປະຕິບັດລາຍຈ່າຍງົບປະມານການເງິນ, ການບັນຊີຂອງສູນຕົນ ຕາມລະບຽບຫຼັກການ;
6. ຕິດຕາມ, ຊຸກຍູ້ສະພາບການຈັດຕັ້ງປະຕິບັດຫຼັກສູດ ແລະ ການນຳໃຊ້ສື່ການຮຽນ-ການສອນການສຶກສານອກໂຮງຮຽນພາຍໃນເມືອງ.
7. ປະຕິບັດໂຄງການຊ່ວຍເຫຼືອລ້າ, ໂຄງການຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຕາມການອະນຸມັດຂອງຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ.
8. ສະເໜີຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ ປົກປ້ອງ, ຄຸ້ມຄອງບຸກຄະລາກອນ, ຊັບສິນ, ລິຂະສິດທາງດ້ານການສຶກສານອກໂຮງຮຽນ ຕາມຄວາມຮັບຜິດຊອບຂອງສູນ.
9. ກວດກາ, ຕີລາຄາ ແລະ ປະເມີນຜົນ ການປະຕິບັດໜ້າທີ່ວຽກງານຂອງພະນັກງານພາຍໃນສູນ.
10. ປະຕິບັດວຽກງານອື່ນຕາມການມອບໝາຍຂອງຂັ້ນເທິງ.

**ຈ. ສູນການຮຽນຮູ້ຊຸມຊົນ.**

ສູນການຮຽນຮູ້ຊຸມຊົນ ມີຂອບເຂດສິດ ດັ່ງນີ້:

1. ສະເໜີແຜນການ ແລະ ແຜນງົບປະມານ ເພື່ອພັດທະນາວຽກງານໃນສູນ.
2. ສົມທົບກັບອຳນາດການປົກຄອງບ້ານ ແລະ ການຈັດຕັ້ງຂັ້ນຕ່າງໆ ເພື່ອຈັດຕັ້ງກອງປະຊຸມກ່ຽວກັບວຽກງານຂອງສູນ.
3. ສະເໜີບັນຈຸ, ແຕ່ງຕັ້ງ ແລະ ປົດຕຳແໜ່ງ ຫົວໜ້າ ແລະ ຮອງຫົວໜ້າສູນ ແລະ ຊັບຊ້ອນ, ຍົກຍ້າຍ, ປະຕິບັດນະໂຍບາຍ ແລະ ປະຕິບັດວິໄນພະນັກງານພາຍໃນສູນ.
4. ຄຸ້ມຄອງ ແລະ ນຳໃຊ້ຊັບສິນ, ວັດຖຸອຸປະກອນຕ່າງໆຂອງສູນ.
5. ປະຕິບັດໂຄງການຊ່ວຍເຫຼືອລ້າຈາກພາຍໃນປະເທດ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທາງສັງຄົມ ແລະ ຊຸມຊົນຕາມການອະນຸມັດຂອງຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ.
6. ປະສານສົມທົບກັບອຳນາດການປົກຄອງແຕ່ລະຂັ້ນ, ການຈັດຕັ້ງທາງສັງຄົມ ແລະ ພາກສ່ວນທີ່ກ່ຽວຂ້ອງເພື່ອຊອກແຫຼ່ງທຶນມາພັດທະນາສູນ.
7. ສະເໜີຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ ປົກປ້ອງ, ຄຸ້ມຄອງບຸກຄະລາກອນ, ຊັບສິນ, ລິຂະສິດທາງດ້ານການສຶກສານອກໂຮງຮຽນຕາມຄວາມຮັບຜິດຊອບຂອງສູນ.
8. ກວດກາ, ຕີລາຄາ ແລະ ປະເມີນຜົນ ການປະຕິບັດໜ້າທີ່ວຽກງານຂອງພະນັກງານພາຍໃນສູນ
9. ເຂົ້າຮ່ວມກອງປະຊຸມ ແລະ ຮ່ວມກິດຈະກຳອື່ນໆຕາມການເຊີນ.
10. ປະຕິບັດສິດອື່ນໆທີ່ປົກຄອງເມືອງ, ຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ ມອບໝາຍໃຫ້.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5. ໂຄງປະກອບກົງຈັກ**

**ກ. ສູນພັດທະນາການສຶກສານອກໂຮງຮຽນ**

ໂຄງປະກອບກົງຈັກຂອງສູນພັດທະນາການສຶກສານອກໂຮງຮຽນ ປະກອບມີ 5 ຂະແໜງ.

1. ຂະແໜງບໍລິຫານ.
2. ຂະແໜງລຶບລ້າງຄວາມບໍ່ຮູ້ໜັງສື ແລະ ບຳລຸງຍົກລະດັບການສຶກສາ.
3. ຂະແໜງພັດທະນາຫຼັກສູດ ແລະ ສື່ການຮຽນ-ການສອນ.
4. ຂະແໜງສົ່ງເສີມວິຊາຊີບຂັ້ນພື້ນຖານ.
5. ຂະແໜງ ປະເມີນຜົນ.

**ຂ. ສູນການສຶກສານອກໂຮງຮຽນພາກ.**

ໂຄງປະກອບກົງຈັກຂອງສູນການສຶກສານອກໂຮງຮຽນພາກ ປະກອບມີ 4 ໜ່ວຍງານ.

1. ໜ່ວຍງານບໍລິຫານ.
2. ໜ່ວຍງານລຶບລ້າງຄວາມບໍ່ຮູ້ໜັງສື ແລະ ບຳລຸງຍົກລະດັບການສຶກສາ.
3. ໜ່ວຍງານສົ່ງເສີມວິຊາຊີບຂັ້ນພື້ນຖານ.
4. ໜ່ວຍງານ ປະເມີນຜົນ.

**ຄ. ສູນການສຶກສານອກໂຮງຮຽນແຂວງ.**

ໂຄງປະກອບກົງຈັກຂອງສູນການສຶກສານອກໂຮງຮຽນຂັ້ນແຂວງ ປະກອບດ້ວຍ 4 ໜ່ວຍງານ.

1. ໜ່ວຍງານບໍລິຫານ.
2. ໜ່ວຍງານລຶບລ້າງຄວາມບໍ່ຮູ້ໜັງສື ແລະ ບໍລຸງຍົກລະດັບການສຶກສາ.
3. ໜ່ວຍງານຝຶກອົບຮົມວິຊາຊີບຂັ້ນພື້ນຖານ.
4. ໜ່ວຍງານ ປະເມີນຜົນ.

**ງ. ສູນການສຶກສານອກໂຮງຮຽນເມືອງ.**

ສູນການສຶກສານອກໂຮງຮຽນເມືອງ ປະກອບດ້ວຍ 4 ຈຸງານ.

1. ຈຸງານບໍລິຫານ.
2. ຈຸງານລຶບລ້າງຄວາມບໍ່ຮູ້ໜັງສື ແລະ ບາລຸງຍົກລະດັບການສຶກສາ.
3. ຈຸງານວິຊາຊີບຂັ້ນພື້ນຖານ.
4. ຈຸງານປະເມີນຜົນ.

**ຈ. ສູນການຮຽນຮູ້ຊຸມຊົນ.**

ໂຄງປະກອບກົງຈັກຂອງສູນການຮຽນຮູ້ຊຸມຊົນປະກອບດ້ວຍ:

1. ບໍລິຫານ.
2. ວິຊາການ.

**ມາດຕາ 6. ໂຄງປະກອບບຸກຄະລາກອນ ແລະ ຕຳແໜ່ງງານ**

**ກ.** ສູນພັດທະນາການສຶກສານອກໂຮງຮຽນ

ປະກອບດ້ວຍຕຳແໜ່ງງານຕ່າງໆ ຈຳນວນ 35 ຕຳແໜ່ງ ມີດັ່ງນີ້:

| | | |
|---|---|---|
| 1. | ຜູ້ອຳນວຍການສູນ | 1 ຕຳແໜ່ງ; |
| 2. | ຮອງຜູ້ອຳນວຍການສູນ | 2 ຕຳແໜ່ງ; |
| 3. | ຫົວໜ້າຂະແໜງ | 5 ຕຳແໜ່ງ; |
| 4. | ຮອງຫົວໜ້າຂະແໜງ | 8 ຕຳແໜ່ງ; |
| 5. | ພະນັກງານບໍລິຫານ | 19 ຕຳແໜ່ງ, ສັງກັດຢູ່: |
| • | ຂະແໜງບໍລິຫານ | **5** ຕຳແໜ່ງ |

- ຂະແໜງລຶບລ້າງຄວາມບໍ່ຮູ້ໜັງສື-ບໍາລຸງຍົກລະດັບການສຶກສາ 4 ຕໍາແໜງ
- ຂະແໜງພັດທະນາຫຼັກສູດ ແລະ ສື່ການຮຽນ-ການສອນ 4 ຕໍາແໜ່ງ
- ຂະແໜງສົ່ງເສີມວິຊາຊີບຂັ້ນພື້ນຖານ 3 ຕໍາແໜ່ງ
- ຂະແໜງປະເມີນຜົນ 3 ຕໍາແໜ່ງ
- ສໍາລັບຄູສອນໃຫ້ປະຕິບັດຕາມດໍາລັດວ່າດ້ວຍລັດຖະກອນຄູ ເລກທີ177/ລບ ນະຄອນຫຼວງວຽງຈັນ, ວັນທີ 05 ເມສາ 2012.

**ຂ. ສູນການສຶກສານອກໂຮງຮຽນພາກ.**

ສູນການສຶກສານອກໂຮງຮຽນພາກ ປະກອບດ້ວຍຕໍາແໜ່ງງານ **24** ຕໍາແໜ່ງ ດັ່ງນີ້:

1. ຜູ້ອໍານວຍການສູນ 1 ຕໍາແໜ່ງ
2. ຮອງຜູ້ອໍານວຍການສູນ 2 ຕໍາແໜ່ງ
3. ຫົວໜ້າໜ່ວຍງານ 4 ຕໍາແໜ່ງ
4. ຮອງຫົວໜ້າໜ່ວຍງານ 5 ຕໍາແໜ່ງ
5. ພະນັກງານບໍລິຫານ 12 ຕໍາແໜ່ງ, ສັງກັດຢູ່:
   - ໜ່ວຍງານບໍລິຫານ 4 ຕໍາແໜ່ງ
   - ໜ່ວຍງານລຶບລ້າງຄວາມບໍ່ຮູ້ໜັງສື ແລະ ບໍລຸງຍົກລະດັບການສຶກສາ **4** ຕໍາແໜງ
   - ໜ່ວຍງານສົ່ງເສີມວິຊາຊີບຂັ້ນພື້ນຖານ **2** ຕໍາແໜ່ງ
   - ໜ່ວຍງານປະເມີນຜົນ 2 ຕໍາແໜ່ງ
   - ສໍາລັບຄູສອນໃຫ້ປະຕິບັດຕາມດໍາລັດວ່າດ້ວຍລັດຖະກອນຄູ ເລກທີ177/ລບ ນະຄອນຫຼວງວຽງຈັນ, ວັນທີ 05 ເມສາ 2012

**ຄ. ສູນການສຶກສານອກໂຮງຮຽນແຂວງ.**

ສູນການສຶກສານອກໂຮງຮຽນ ແຂວງ ປະກອບດ້ວຍ 21 ຕໍາແໜ່ງງານ ດັ່ງນີ້:

1. ຜູ້ອໍານວຍການສູນ 1 ຕໍາແໜ່ງ
2. ຮອງຜູ້ອໍານວຍການສູນ 2 ຕໍາແໜ່ງ
3. ຫົວໜ້າໜ່ວຍງານ 4 ຕໍາແໜ່ງ
4. ຮອງຫົວໜ້າໜ່ວຍງານ 4 ຕໍາແໜ່ງ
5. ພະນັກງານບໍລິຫານ 10 ຕໍາແໜ່ງ
   - ໜ່ວຍງານບໍລິຫານ 3 ຕໍາແໜ່ງ
   - ໜ່ວຍງານລຶບລ້າງຄວາມບໍ່ຮູ້ໜັງສື ແລະ ບໍລຸງຍົກລະດັບການສຶກສາ 3 ຕໍາແໜ່ງ
   - ໜ່ວຍງານວິຊາຊີບຂັ້ນພື້ນຖານ 2 ຕໍາແໜ່ງ
   - ໜ່ວຍງານປະເມີນຜົນ 2 ຕໍາແໜ່ງ
   - ສໍາລັບຄູສອນໃຫ້ປະຕິບັດຕາມດໍາລັດວ່າດ້ວຍລັດຖະກອນຄູ ເລກທີ177/ລບ ນະຄອນຫຼວງວຽງຈັນ, ວັນທີ 05 ເມສາ 2012.

**ງ. ສູນການສຶກສານອກໂຮງຮຽນເມືອງ.**

ສູນການສຶກສານອກໂຮງຮຽນ ເມືອງ ປະກອບດ້ວຍ **17** ຕໍາແໜ່ງງານ ດັ່ງນີ້:

1. ຜູ້ອໍານວຍການສູນ 1 ຕໍາແໜ່ງ
2. ຮອງຜູ້ອໍານວຍການສູນ 1 ຕໍາແໜ່ງ

3. ຫົວໜ້າຈຸງານ 4 ຕໍາແໜ່ງ
4. ຮອງ ຫົວໜ້າຈຸງານ 2 ຕໍາແໜ່ງ
5. ພະນັກງານບໍລິຫານ 9 ຕໍາແໜ່ງ

- ຈຸງານບໍລິຫານ 2 ຕໍາແໜ່ງ
- ຈຸງານລຶບລ້າງຄວາມບໍ່ຮູ້ໜັງສື ແລະ ບໍລຸງຍົກລະດັບການສຶກສາ 3 ຕໍາແໜ່ງ
- ຈຸງານວິຊາຊີບຂັ້ນພື້ນຖານ 2 ຕໍາແໜ່ງ
- ຈຸງານປະເມີນຜົນ 2 ຕໍາແໜ່ງ
- ສໍາລັບຄູສອນໃຫ້ປະຕິບັດຕາມດໍາລັດວ່າດ້ວຍລັດຖະກອນຄູ ເລກທີ177/ລບ ນະຄອນຫຼວງວຽງຈັນ ວັນທີ 05 ເມສາ 2012.

**ຈ. ສູນການຮຽນຮູ້ຊຸມຊົນ.**

ສູນການຮຽນຮູ້ຊຸມຊົນປະກອບດ້ວຍ **04** ຕໍາແໜ່ງ ດັ່ງນີ້:

1. ຫົວໜ້າສູນ 1 ຕໍາແໜ່ງ
2. ຮອງຫົວໜ້າສູນ 1 ຕໍາແໜ່ງ
3. ວິຊາການ 2 ຕໍາແໜ່ງ
4. ຄະນະທີ່ປຶກສາສູນປະກອບດ້ວຍອົງການຈັດຕັ້ງຂອງບ້ານ,ຕາງໜ້າຄະນະພັດທະນາການສຶກສາຂັ້ນບ້ານ ໂດຍນາຍບ້ານເປັນປະທານ.

**ມາດຕາ 7. ການແຕ່ງຕັ້ງຕໍາແໜ່ງບໍລິຫານ**

1. ຜູ້ອໍານວຍການສູນພັດທະນາການສຶກສານອກໂຮງຮຽນ ປະເພດ 3 ແລະ ຮອງຜູ້ອໍານວຍການສູນພັດທະນາການສຶກສານອກໂຮງຮຽນ 4.
2. ຜູ້ອໍານວຍການສູນການສຶກສານອກໂຮງຮຽນພາກ ປະເພດ 4 ແລະ ຮອງຜູ້ອໍານວຍການສູນການສຶກສານອກໂຮງຮຽນພາກ ປະເພດ 5.
3. ຜູ້ອໍານວຍການສູນການສຶກສານອກໂຮງຮຽນແຂວງ ປະເພດ 4 ແລະ ຮອງຜູ້ອໍານວຍການສູນການສຶກສານອກໂຮງຮຽນແຂວງ ປະເພດ 5
4. ຜູ້ອໍານວຍການສູນການສຶກສານອກໂຮງຮຽນເມືອງ ປະເພດ 5 ແລະ ຮ່ອງຜູ້ອໍານວຍການສູນການສຶກສານອກໂຮງຮຽນເມືອງ ດໍາລົງຕໍາແໜ່ງປະເພດ 6.
5. ຫົວໜ້າສູນການຮຽນຮູ້ຊຸມຊົນປະເພດ 7 ແລະ ຮ່ອງຫົວໜ້າສູນຮຽນຮູ້ຊຸມຊົນ ປະເພດ 8 ຊຶ່ງໄດ້ຮັບການແຕ່ງຕັ້ງຈາກຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ.

## ໝວດທີ 4
## ລະບອບແບບແຜນວິທີເຮັດວຽກ

**ມາດຕາ8. ຫຼັກການເຮັດວຽກ**

ສູນການສຶກສານອກໂຮງຮຽນ ເຄື່ອນໄຫວວຽກງານຕາມພາລະບົດບາດ ແລະ ຫຼັກການ ດັ່ງນີ້:

1. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ, ແບ່ງວຽກງານໃຫ້ບຸກຄົນຮັບຜິດຊອບ, ປະຕິບັດລະບອບຫົວໜ້າດຽວ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານລັດຖະກອນໃນການຄຸ້ມຄອງ ແລະ ພັດທະນາການສຶກສາ ແລະ ກິລາແຫ່ງຊາດ.
2. ເຮັດວຽກຕາມຍຸດທະສາດ, ມີແຜນການ, ແຜນງານ ແລະ ໂຄງການລະອຽດ, ມີການກໍານົດຄາດໝາຍ, ມີຈຸດສຸມ ໃນແຕ່ລະໄລຍະຂອງການພັດທະນາ.

3. ຄຸ້ມຄອງ-ບໍລິຫານ ຂະແໜງການຕາມສາຍຕັ້ງ, ປະສານສົມທົບກັບສາຍຂວາງ, ຕາມລະບົບການຈັດຕັ້ງການຄຸ້ມຄອງລັດ ລະຫວ່າງສູນກາງ ແລະ ທ້ອງຖິ່ນ.
4. ເຮັດວຽກມີການຕິດຕາມ, ກວດກາ, ປະເມີນຜົນ, ຊຸກຍູ້, ສົ່ງເສີມ, ສະຫຼຸບຕີລາຄາ ແລະ ຖອດຖອນບົດຮຽນໃນແຕ່ລະໄລຍະ.
5. ປະຕິບັດລະບອບປະຊຸມ, ລາຍງານສ່ອງແສງຢ່າງປົກກະຕິ ແລະ ລາຍງານໃຫ້ຂັ້ນເທິງຊາບ.

**ມາດຕາ9. ການປະສານງານ**

ສູນການສຶກສານອກໂຮງຮຽນມີການພົວພັນ ແລະ ປະສານງານໂດຍກົງກັບບັນດາກົມ, ອົງການທຽບເທົ່າກົມ, ສະຖາບັນ, ສູນ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງຕ່າງໆ ທັງພາກລັດ ແລະ ເອກະຊົນຕາມການເຫັນດີຂອງຂັ້ນເທິງ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 10. ງົບປະມານ ແລະ ຕາປະທັບ**

ສູນພັດທະນາການສຶກສານອກໂຮງຮຽນ, ສູນພາກ, ສູນແຂວງ, ສູນເມືອງ ແລະ ສູນການຮຽນຮູ້ຊຸມຊົນມີງົບປະມານຮັບໃຊ້ວຽກງານຂອງຕົນ ຊຶ່ງໄດ້ມາຈາກງົບປະມານຂອງກະຊວງສຶກສາທິການ ແລະ ກິລາ, ການຊ່ວຍເຫຼືອຂອງສັງຄົມ, ຊຸມຊົນ, ການຮ່ວມມືຈາກບັນດາປະເທດເພື່ອນມິດ, ອົງການຈັດຕັ້ງສາກົນທັງພາຍໃນ ແລະ ຕ່າງປະເທດ ແລະ ມີກາປະທັບເພື່ອຮັບໃຊ້ວຽກງານທາງລັດຖະການ.

**ມາດຕາ 11. ການຜັນຂະຫຍາຍ**

ມອບໃຫ້ສູນພັດທະນາການສຶກສານອກໂຮງຮຽນ, ສູນພາກ, ສູນແຂວງ, ສູນເມືອງ ແລະ ສູນການຮຽນຮູ້ຊຸມຊົນ ກຳນົດໜ້າທີ່ ແລະ ກິດຈະກຳລະອຽດຂອງແຕ່ລະຂະແໜງ, ໜ່ວຍງານ ແລະ ຈຸງານ ລວມທັງກຳນົດມາດຕະຖານແຕ່ລະຕຳແໜ່ງງານ, ໜ່ວຍງານ ແລະ ຈຸງານ ພ້ອມທັງນຳສະເໜີກະຊວງອະນຸມັດນຳໃຊ້ ແລະ ບັນຈຸ, ສັບຊ້ອນພະນັກງານເຂົ້າໃນແຕ່ລະຕຳແໜ່ງງານດັ່ງກ່າວຕາມຄວາມເໝາະສົມ.

**ມາດຕາ 12. ການຈັດຕັ້ງປະຕິບັດ.**

ຫ້ອງການ, ບັນດາກົມ, ອົງການທຽບເທົ່າກົມ, ສະຖາບັນ, ພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ເທດສະບານລວມທັງຫົວໜ່ວຍການ ສຶກສາ ແລະ ກິລາຕ່າງໆ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມ ງວດ ແລະ ໃຫ້ໄດ້ຮັບຜົນດີ.

**ມາດຕາ 13. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ທຸກຂໍ້ຕົກລົງ ແລະ ເອກະສານຕ່າງໆຊຶ່ງປະກາດໃຊ້ໃນເມື່ອກ່ອນທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກລົບລ້າງ.

ບ່ອນສົ່ງ:

| | | |
|---|---|---|
| 1. | ກະຊວງພາຍໃນ | 1 ສະບັບ |
| 2. | ຫ້ອງການກະຊວງສຶກສາທິການ ແລະກິລາ | 1 ສະບັບ |
| 3. | ບັນດາກົມ ແລະ ສະຖາບັນພາກສ່ວນລະ | 1 ສະບັບ |
| 4. | ພະແນກສຶກສາທິການ ແລະ ກິລາ | 1 ສະບັບ |
| | ນະຄອນຫຼວງ-ແຂວງໆ ລະ | 1 ສະບັບ |
| 5. | ຫ້ອງການສຶກສາທິການ ແລະ ກິລາ ເມືອງລະ | 1 ສະບັບ |
| 6. | ພາກສ່ວນທີ່ກ່ຽວຂ້ອງ | 1 ສະບັບ |
| 7. | ເກັບມ້ຽນ | 3 ສະບັບ |

ທ. ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ

ລັດຖະມົນຕີ

ນ. ແສງເດືອນ ຫຼ້າຈັນທະບູນ